ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 272/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 26 ພຶດສະພາ 2021

# ຂໍ້ຕົກລົງ
# ວ່າດ້ວຍການປັບຫຼຸດອັດຕາສ່ວນເງິນແຮຝາກບັງຄັບ

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ສະບັບເລກທີ 56/ສພຊ, ລົງວັນທີ 07 ທັນວາ 2018;
- ອີງຕາມຂໍ້ຕົກລົງວ່າດ້ວຍການປັບຫຼຸດອັດຕາສ່ວນເງິນແຮຝາກບັງຄັບ ສະບັບເລກທີ 226/ທຫລ, ລົງວັນທີ 20 ມີນາ 2020.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ເພື່ອປັບຫຼຸດອັດຕາສ່ວນເງິນແຮຝາກບັງຄັບຂອງທະນາຄານທຸລະກິດທີ່ມີພັນທະຈັດຕັ້ງປະຕິບັດເງິນແຮຝາກບັງຄັບຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ ທີ່ກຳນົດອອກ.

**ມາດຕາ 2 ປັບຫຼຸດອັດຕາສ່ວນເງິນແຮຝາກບັງຄັບ**

1. ປັບຫຼຸດອັດຕາສ່ວນເງິນແຮຝາກບັງຄັບສະກຸນເງິນກີບ ຈາກ 4% ມາເປັນ 3%;
2. ປັບຫຼຸດອັດຕາສ່ວນເງິນແຮຝາກບັງຄັບສະກຸນເງິນຕາຕ່າງປະເທດ ຈາກ 8% ມາເປັນ 5%.

**ມາດຕາ 3 ການຈັດຕັ້ງປະຕິບັດ**

ໃຫ້ທະນາຄານທຸລະກິດທີ່ມີພັນທະຈັດຕັ້ງປະຕິບັດເງິນແຮຝາກບັງຄັບຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ, ກົມບໍລິການທະນາຄານ, ກົມບັນຊີແລະການເງິນ, ກົມຄຸ້ມຄອງທະນາຄານທຸລະກິດ ແລະ ພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 4 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນທີ 10 ມິຖຸນາ 2021 ເປັນຕົ້ນໄປ ແລະ ນິຕິກຳອື່ນທີ່ ທຫລ ໄດ້ອອກກ່ອນໜ້ານີ້ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແລ້ວແຕ່ຖືກຍົກເລີກ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສ.ປ.ປ.ລ
ຜູ້ວ່າການ

ສອນໄຊ ສິດພະໄຊ